*Journal of Science and Teacher Education (JLSTE), 1(2), 549-557*

# ສຳຫຼວດລະດັບຄວາມຄິດເຫັນຕໍ່ກັບພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

*ຊອ.ປທ ຈິດຕະກອນ ອິນສີຊຽງໃໝ່*, ຣສ. ປທ. ນ ວົງແສງເດືອນ ປະຊາສຸກ, ອຈ. ປທ. ນ ນິລາວັນ ບຸບຜາວັນ*

*ປທ. ນ ສຸພາພັກ ຈິດຕະບຸບຜາ, ປທ. ບຸນເລັດ ທິງອາສາ*

*ພາກວິຊາ ຈິດຕະວິທະຍາການສຶກສາ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ*

***ບົດຄັດຫຍໍ້***

ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ແມ່ນເພື່ອສຶກສາລະດັບຄວາມຄິດເຫັນຕໍ່ກັບພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າແມ່ນນັກສຶກສາປີທີ 2 ທັງ 12 ສາຂາວິຊາທີ່ກຳລັງສຶກສາທີ່ຄະນະສຶກສາສາດ ເຊິ່ງລວມມີທັງໝົດ 209 ຄົນ ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມສະແດງຄວາມຄິດເຫັນແບບມາດຕາສ່ວນປະເມີນຄ່າ 5 ລະດັບ. ຈຳນວນຜູ້ຕອບແບບສອບຖາມທີ່ຄົບຖ້ວນ ແລະ ເກັບມາໄດ້ລວມມີທັງໝົດ 173 ຊຸດ (ຄົນ) ເຊິ່ງຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນນັກສຶກສາເພດຍິງ ລວມມີຈຳນວນ 116 ຄົນ ກວມ 67.05%. ຜົນການຄົ້ນຄວ້າພົບວ່າ ພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ສົກສຶກສາ 2022-2023 ໂດຍລວມຢູ່ໃນລະດັບປະຕິບັດຫຼາຍ. ເມື່ອປຽບທຽບຕາມຕົວປ່ຽນເພດພົບວ່າ ຄວາມມີວິໄນໃນຕົນເອງຂອງນັກສຶກສາໂດຍລວມຂອງສຶກສາຍິງ ແລະ ຊາຍແມ່ນບໍ່ແຕກຕ່າງກັນ. ນັກສຶກສາທີ່ຮຽນສາຂາວິຊາແຕກຕ່າງກັນກໍບໍ່ມີຄວາມແຕກຕ່າງກັນທາງດ້ານພຶດຕິກຳຄວາມມີວິໄນໃນຕົນເອງ. ເຖິງແນວໃດກໍຕາມ, ເມື່ອພິຈາລະນາເປັນແຕ່ລະດ້ານສາມາດຈັດລຽງ ລຳດັບຈາກຄ່າສະເລ່ຍແຕ່ສູງຫາຕໍ່າດັ່ງນີ້: ດ້ານການປະຕິບັດກົດລະບຽບ, ດ້ານຄວາມຕົງຕໍ່ເວລາ, ດ້ານແຮງຈູງໃຈໃຝ່ສຳເລັດ, ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ ແລະ ດ້ານຄວາມຮັບຜິດຊອບຕາມລຳດັບ. ດ້ານທີ່ມີລະດັບການປະຕິບັດໃນລະດັບປານກາງລວມມີ ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ ($\mu$= 3.48, $\sigma$= 0.99) ແລະ ດ້ານຄວາມຮັບຜິດຊອບ ($\mu$= 3.04, $\sigma$= 1.11). ຈາກຜົນການຄົ້ນຄວ້າດັ່ງກ່າວ, ຄະນະຜູ້ຄົ້ນຄວ້າຈຶ່ງຂໍສະເໜີແນະດັ່ງນີ້: 1) ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ: ຄູອາຈານຄວນຈັດກິດຈະກຳທີ່ຫຼາກຫຼາຍເພື່ອສົ່ງເສີມໃຫ້ນັກສຶກສາມີສ່ວນຮ່ວມຫຼາຍຂຶ້ນ ເຊິ່ງເປັນການເປີດໂອກາດໃຫ້ນັກສຶກສາໄດ້ພັດທະນາຄວາມສາ ມາດຂອງຕົນອັນຈະສົ່ງຜົນຕໍ່ການເສີມສ້າງຄວາມໝັ້ນໃຈໃນຕົນເອງໃຫ້ເຂົາເຈົ້າ 2) ດ້ານຄວາມຮັບຜິດຊອບ: ຄູອາຈານຄວນເຂັ້ມງວດໃຫ້ນັກສຶກສາມີຄວາມເປັນລະບຽບທຸກຄັ້ງ. ກ່ອນຈະສົ່ງວຽກບ້ານ ຫຼື ວຽກມອບໝາຍຕ້ອງມີການກວດການຄືນໃຫ້ລະອຽດຖີ່ຖ້ວນຄືນ ເພື່ອຫຼີກເວັ້ນສິ່ງຜິດພາດຕ່າງໆ. ຄູຄວນມີການຕິດຕາມກວດກາຕໍ່ເນື່ອງເພື່ອສັງເກດການປ່ຽນແປງຂອງນັກສຶກສາໃນດ້ານຄວາມຮັບຜິດຊອບຕໍ່ການຮຽນ. ນອກຈາກນັ້ນ, ຄູອາຈານຄວນນຳເຕັກນິກວິທີການເສີມແຮງໄປໝູນໃຊ້ກັບລາຍວິຊາຕ່າງໆ ເພື່ອປັບປຸງ ແລະ ສົ່ງເສີມພຶດຕິກຳດ້ານຄວາມຮັບຜິດຊອບຂອງນັກສຶກສາ.

***ຄຳສັບສຳຄັນ:*** *ພຶດຕິກຳຄວາມມີວິໄນໃນຕົນເອງ, ຄວາມຮັບຊອບຕໍ່ການຮຽນ, ຄວາມເຊື່ອໝັ້ນໃນຕົນເອງ, ຄວາມຕົງຕໍ່ເວລາ, ການປະຕິບັດກົດລະບຽບ, ແຮງຈູງໃຈໃຝ່ສຳເລັດ*

**ຕິດຕໍ່ພົວພັນ: ຊອ.ປທ ຈິດຕະກອນ ອິນສີຊຽງໃໝ່, ໂທ: 020 5258 5444; ອີເມວ: j.inseachiangmai@nuol.edu.la*

# A Survey on the Attitudes of Second-Year Student Teachers toward Self-Disciplined Behaviour and Learning Accountability in the Faculty of Education, National University of Laos

*Jittakorn Inseachiangmai*, Assoc. Prof. Vongsengdeaune Pasasouk, Nylavanh Boubphavanh, Souphaphack Chittaboupha, Bounleth Thongasa*

*Department of Educational Psychology, Faculty of Education, National University of Laos*

## Abstract

The purpose of this study was to examine the level of attitudes towards self-discipline behaviour and learning accountability of second-year student teachers in the Faculty of Education at the National University of Laos academic year 2022-2023. The target group consisted of 209 second-year students from 12 different majors within the Faculty of Education. Data was collected using a 5-point Likert-scale questionnaire. A total of 173 complete responses were obtained, with the majority being female students (116 respondents, 67.05%). Research findings found that, overall, second-year students' self-discipline behaviour and learning accountability were at high level. No significant difference was observed between male and female student teachers in these aspects. Similarly, student teachers across different academic majors showed comparable levels of self-discipline and learning accountability. When analyzed by individual aspects, it was found that the results (ranked from highest to lowest average scores) were as follows: compliance with rules, punctuality, achievement motivation, self-confidence and accountability, respectively. Self-confidence ($\mu$= 3.48, $\sigma$= 0.99) and accountability ($\mu$= 3.04, $\sigma$= 1.11) emerged as aspects requiring further development, with students demonstrating only moderate levels of these qualities. To further enhance these traits, the research team proposes the following recommendations: 1) Regarding Self-Confidence: teachers should organize diverse activities to encourage greater student participation, providing opportunities for students to develop their skills and build self-confidence; 2) Regarding Accountability: teachers should strictly enforce discipline at all times. Before submitting assignments, students' work should be reviewed in detail and frequently to avoid mistakes. Also, teachers should continuously monitor students to observe changes in their learning accountability. Additionally, teachers should apply motivational techniques across various subjects to improve and promote students' sense of responsibility for their learning.

***Key words:*** *Self-disciplined behaviour, Learning accountability, Self-confidence, Punctuality, Compliance with rules, Achievement motivation.*

**Correspondence: Jittakorn Inseachiangmai; Tel: 020 52585444; Email: j.inseachiangmai@nuol.edu.la*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກໂນໂລຊີ ແລະ ການປ່ຽນແປງຂອງໂລກທີ່ເກີດຂຶ້ນຢ່າງວ່ອງໄວ ໄດ້ກະຕຸ້ນໃຫ້ແຕ່ລະປະເທດ ຕ້ອງໄດ້ວາງຍຸດທະສາດໃນການພັດທະນາປະເທດຂອງຕົນໃຫ້ທຽບເທົ່າກັບພາກພື້ນ ແລະ ສາກົນ. ໜຶ່ງໃນບຸລິມະສິດຍຸດທະສາດທີ່ຈະຊ່ວຍໃຫ້ຂັບເຄື່ອນປະເທດຊາດ ໃຫ້ມີການເຕີບໃຫຍ່ ແລະ ພັດທະນາໄດ້ກໍແມ່ນເລັ່ງພັດທະນາບຸກຄະລາກອນໃຫ້ມີຄຸນະພາບ ເພື່ອໃຫ້ກາຍເປັນຊັບພະຍາກອນມະນຸດທີ່ເຕັມປ່ຽມສັກກະຍະພາບສາມາດຮັບມືກັບສິ່ງທ້າທາຍ ແລະ ການປ່ຽນແປງຂອງສັງຄົມໂລກ.

ເພື່ອຕອບສະໜອງບຸກຄະລາກອນ ໃຫ້ມີຄຸນະພາບແກ່ສັງຄົມ, ກະຊວງສຶກສາທິການ ແລະ ກິລາ (2011, ໜ້າ 69-70) ຈຶ່ງເນັ້ນຢ້ຳວ່າ ການພັດທະນາຄົນແມ່ນປັດໄຈສຳຄັນຕົ້ນຕໍໃນຍຸກວິທະ ຍາສາດ-ເຕັກໂນໂລຊີ ແລະ ການເຊື່ອມໂຍງ; ສະນັ້ນຕ້ອງສຸມໃສ່ພັດທະນາລະບົບອາຊີວະສຶກສາ ເພື່ອສ້າງຄົນໃຫ້ມີຄວາມຫຼາກຫຼາຍທາງດ້ານລະດັບຄວາມຮູ້, ຄວາມສາມາດເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນະພາບ.

ຄະນະສຶກສາສາດ ແມ່ນໜຶ່ງໃນ 13 ຄະນະວິຊາທີ່ຂຶ້ນກັບມະຫາວິທະຍາໄລແຫ່ງຊາດ (ມຊ) ຕັ້ງຢູ່ວິທະຍາເຂດດົງໂດກ. ເມື່ອເວົ້າເຖິງຄຳຂວັນຂອງຄະນະສຶກສາສາດ "ຄູສ້າງຄົນ ຄົນສ້າງຊາດ ສຶກສາສາດສ້າງຄູ" ຫຼາຍໆ ຄົນຄົງຮູ້ຈັກກັນດີ. ຄະນະສຶກສາສາດປຽບໄດ້ວ່າ ເປັນເບົ້າຫຼອມສຳຄັນແຫ່ງໜຶ່ງທີ່ຊຸບຫຼໍ່ບຸກຄະລາກອນຄູທີ່ມີຄຸນະພາບອອກຮັບໃຊ້ສັງຄົມ. ແນ່ນອນວ່າບຸກຄົນເຫຼົ່ານັ້ນຈະຕ້ອງເປັນບຸກຄົນທີ່ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດສົມທຳປະຕິວັດ, ມີສຸຂະພາບພະລານາໄມ, ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ, ມີລະບຽບວິໄນ, ມີນ້ຳໃຈຮັກປະເທດຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ. ເວົ້າອີກຢ່າງໜຶ່ງວ່າ ຄະນະສຶກສາສາດນອກຈາກຈະສ້າງຄູໃຫ້ມີຄວາມຮູ້ຄວາມ

ສາມາດໃນການສອນວິຊາສະເພາະຂອງຕົນແລ້ວ, ຍັງແນໃສ່ສ້າງຄົນໃຫ້ມີການພັດທະນາຢ່າງຮອບດ້ານຕາມ 5 ຫຼັກມູນຂອງກະຊວງສຶກສາ ທິການ ແລະ ກິລາວາງອອກ.

ວິໄນ ໝາຍເຖິງຂໍ້ປະຕິບັດ, ຂໍ້ບັງຄັບ, ລະບຽບອັນດີ (ທອງຄໍາ ອ່ອນມະນີສອນ, 2008, ໜ້າ 719). ປະພາພັນ ອ່ຽມສຸພາສິດ (2532) ໃຫ້ຄວາມໝາຍຂອງຄວາມມີວິໄນໃນຕົນເອງວ່າ ໝາຍເຖິງການທີ່ບຸກຄົນບັງຄັບຄວບຄຸມຕົນເອງທັງກາຍ, ວາຈາ, ໃຈໃຫ້ປະຕິບັດໄດ້ເໝາະສົມກັບສະຖານະການ, ເວລາ ແລະ ເປັນໄປຕາມເງື່ອນໄຂ, ກົດເກນ, ກະຕິກາ ຫຼື ຂໍ້ຕົກລົງທີ່ສັງຄົມກໍານົດໄວ້ດ້ວຍຄວາມເຕັມໃຈ. ບຸນຊົມ ສີສະອາດ (2528, ໜ້າ 3-15) ເນັ້ນວ່າ ວິໄນໃນຕົນເອງເປັນປັດໄຈທີ່ມີຄວາມສໍາຄັນຢ່າງຍິ່ງ. ການມີວິໄນ ບໍ່ພຽງແຕ່ຈະຊ່ວຍໃຫ້ບຸກຄົນປະສົບຜົນສໍາເລັດໃນການດໍາລົງຊີວິດ, ໄດ້ຮັບການຍອມຮັບ ແລະ ຊົມເຊີຍຈາກຜູ້ອື່ນແລ້ວ, ຍັງຊ່ວຍໃຫ້ຊຸມຊົນ, ສັງຄົມ ແລະ ປະເທດຊາດມີຄວາມສະຫງົບສຸກ, ກ້າວໜ້າ ແລະ ພັດທະນາສູ່ສັງຄົມທີ່ມີຄຸນນະພາບ. ດັ່ງນັ້ນ ຈຶ່ງຈໍາເປັນຕ້ອງປູກຝັງ ແລະ ພັດທະນາວິໄນໃນຕົນເອງຕັ້ງແຕ່ໄວເດັກ ພ້ອມທັງຮັກສາໄວ້ຢ່າງຕໍ່ເນື່ອງຕະຫຼອດຊີວິດ ເນື່ອງຈາກວິໄນໃນຕົນເອງເປັນພື້ນຖານທີ່ໝັ້ນຄົງສໍາລັບການປະຕິບັດຢ່າງຍືນຍົງ ແລະ ເປັນກະແຈສໍາຄັນສູ່ຄວາມສໍາເລັດໃນທຸກດ້ານ.

ການພັດທະນາວິໄນໃນຕົວຜູ້ຮຽນ ຈຶ່ງມີຄວາມສໍາຄັນທີ່ສຸດ ເພາະຈະຊ່ວຍພັດທະນາຜູ້ຮຽນໃຫ້ມີຄວາມສົມດຸນ ທັງດ້ານສະຕິປັນຍາ, ຈິດໃຈ ແລະ ສັງຄົມ, ເປັນຜູ້ຮູ້ຈັກວິເຄາະ, ໃຊ້ເຫດຜົນທາງວິທະຍາສາດ, ມີຄວາມຄິດສ້າງສັນ ແລະ ຮັກການຮຽນຮູ້, ຮູ້ວິທີແກ້ໄຂບັນຫາ ແລະ ສາມາດຮຽນຮູ້ໄດ້ດ້ວຍຕົນເອງ, ມີຄວາມຮັບຜິດຊອບໃນໜ້າທີ່ຕົນເອງ (ເສີມສັກ ວິສາລາພອນ, 2550). ອີກດ້ານໜຶ່ງຂອງຄວາມຮັບຜິດຊອບທີ່ຕ້ອງມີ ແລະ ໄດ້ຮັບການພັດທະນາ ແມ່ນຄວາມຮັບຜິດຊອບຕໍ່ການຮຽນ ເຊິ່ງເປັນສິ່ງທີ່ສໍາຄັນຫຼາຍ. ການທີ່ຜູ້ຮຽນປະຕິບັດສະແດງພຶດຕິກໍາໃຫ້ ຄວາມສົນໃຈໃນການສະແຫວງຫາຄວາມຮູ້ ພ້ອມທີ່ຈະສຶກສາ ແລະ ມີສະມາທິຈົດຈໍ່ໃນການຮຽນຮູ້ ແລະ ສຸມໃສ່ວຽກທີ່ຕົນໄດ້ຮັບມອບໝາຍໄດ້ຢ່າງມີປະສິດທິພາບ. ຜົນການສຶກສາຄົ້ນຄວ້າຂອງ Carpenter & Pease (2013) ແລະ Fritz (2017) ພົບວ່າຄວາມຮັບຜິດຊອບໃນການຮຽນຊ່ວຍໃຫ້ຜູ້ຮຽນປະສົບຜົນສໍາເລັດ ແລະ ເປັນພື້ນຖານຂອງການໃຊ້ຊີວິດຕໍ່ໄປ. ຜູ້ຮຽນທີ່ມີຄວາມຮັບຜິດຊອບເມື່ອເຕີບໃຫຍ່ຂຶ້ນຈະປະສົບຄວາມສໍາເລັດໃນການສຶກສາຕໍ່ໃນລະດັບສູງຂຶ້ນ ຫຼາຍກວ່າຜູ້ທີ່ຂາດຄວາມຮັບຜິດຊອບຕໍ່ການຮຽນ. ສະນັ້ນ, ຖ້ານັກສຶກສາຫາກຂາດຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນແລ້ວ ກໍຍາກທີ່ຈະປະສົບຜົນສໍາເລັດໃນການຮຽນ.

ຈາກເຫດຜົນຂ້າງເທິງ ຈຶ່ງເຫັນໃຫ້ຄະນະຜູ້ຄົ້ນຄວ້າມີຄວາມສົນໃຈສຶກສາພຶດຕິກໍາຄວາມມີວິໄນ ແລະ ຄວາມຮັບຜິດຊອບໃນການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ສົກສຶກສາ 2022-2023 ເພື່ອທີ່ຈະເປັນແນວທາງໃນການສົ່ງເສີມພຶດຕິກໍາຄວາມມີວິໄນ ແລະ ຄວາມຮັບຜິດຊອບໃນການຮຽນຂອງນັກສຶກສາພາຍໃນຄະນະສຶກສາສາດ ກໍຄືຄະນະວິຊາອ້ອມຂ້າງແນໃສ່ພັດທະນານັກສຶກສາໃຫ້ມີຄວາມອົດທົນ, ດຸໝັ່ນພາກພຽນ ແລະ ມີແຮງຈູງໃຈໃນການຮຽນຫຼາຍຂຶ້ນ.

*1.2. ຄໍາຖາມຂອງການຄົ້ນຄ້ວາ*

1) ພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດຢູ່ໃນລະດັບໃດ?

2) ພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລະຫວ່າງເພດຊາຍ ແລະ ເພດຍິງມີຄວາມແຕກຕ່າງກັນບໍ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

ບົດຄົ້ນຄວ້າມີຈຸດປະສົງ

1) ເພື່ອສຶກສາລະດັບຄວາມຄິດເຫັນຕໍ່ກັບພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

2) ເພື່ອປຽບທຽບພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລະຫວ່າງເພດຊາຍ ແລະ ເພດຍິງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການມີວິໄນໃນຕົນເອງຖືວ່າ ເປັນປັດໄຈສໍາຄັນຢ່າງໜຶ່ງທີ່ນໍາໄປສູ່ຄວາມສໍາເລັດ ເນື່ອງຈາກຜູ້ທີ່ປະສົບຜົນສໍາເລັດໃນຊີວິດລ້ວນເປັນບຸກຄົນທີ່ມີຄວາມຮັບຜິດຊອບ, ມີຫຼັກຄຸນະທໍາ, ຈະລິຍະທໍາ ແລະ ຄວາມມີວິໄນໃນຕົນເອງເປັນພື້ນຖານ ເຊັ່ນ: ເປັນຜູ້ຕົງຕໍ່ເວລາແລະ ເຄົາລົບກົດເກນຂອງສັງຄົມ (ສຸເມດ ດ້ວງຈູ,2024) ຈາກການຄົ້ນຄວ້າຂອງທ່ານຊີ້ໃຫ້ເຫັນວ່າ ລະດັບຄວາມມີວິໄນໃນຕົນເອງຂອງນັກສຶກສາວິທະຍາໄລອາຊີວະສຶກສາເອກະຊົນ ໃນກຸງເທບມະຫານະຄອນໂດຍລວມແມ່ນຢູ່ໃນລະດັບສູງ. ປັດໄຈທີ່ສົ່ງຜົນຕໍ່ຄວາມມີວິໄນໃນຕົນເອງຂອງນັກສຶກສາ ຈາກຫຼາຍທີ່ສຸດຫານ້ອຍທີ່ສຸດລວມມີລັກສະນະມຸ່ງອະນາຄົດ, ການຈັດສະພາບແວດລ້ອມພາຍໃນວິທະຍາໄລ, ການເຫັນແບບຢ່າງທາງສັງຄົມ, ທັດສະ

ນະຄະຕິຕໍ່ຄວາມມີລະບຽບວິໄນ, ອິດທິພົນຂອງສື່, ຄວາມສຳພັນພາຍໃນຄອບຄົວ ແລະ ຄວາມສົນໃຈຄຸນະທຳສ່ວນຕົວ.

ການຄົ້ນຄວ້າຂອງ ອຳນາດ ຈັນທະຣະມະຫາ (2542) ພົດຊີ້ໃຫ້ເຫັນວ່າ ຄວາມມີວິໄນໃນຕົນເອງຂອງນັກສຶກສາໃນແຂວງຮ້ອຍເອັດ ແມ່ນຢູ່ໃນລະດັບປານກາງ. ເມື່ອພິຈາລະນາຕາມກົມສັງກັດພົບວ່າ ກົມອາຊີວະສຶກສາ ແລະ ສຳນັກງານຄະນະກຳມະການການສຶກສາເອກະຊົນມີຄວາມມີວິໄນໃນຕົນເອງແມ່ນຢູ່ໃນລະດັບຕ່ຳ. ສ່ວນກົມອື່ນໆ ແມ່ນຢູ່ໃນລະດັບກາງ. ເມື່ອແຍກຍ່ອຍຂອງແຕ່ລະດ້ານພົບວ່າ ດ້ານຄວາມເຊື່ອໝັ້ນໃນຕົນເອງ, ດ້ານຄວາມຕົງຕໍ່ເວລາ ແລະ ດ້ານຄວາມເສຍສະຫຼະກໍຢູ່ໃນລະດັບປານກາງເຊັ່ນດຽວກັນ. ສ່ວນດ້ານຄວາມຊື່ສັດ, ດ້ານຄວາມຮັບຜິດຊອບ ແລະ ດ້ານຄວາມເປັນຜູ້ນຳພົບວ່າ ນັກສຶກສາສັງກັດສຳນັກງານຄະນະກຳມະການການສຶກສາເອກະຊົນມີຄວາມວິໄນໃນຕົນເອງຕ່ຳ. ຂວັນໃຈ ອຸນທະວັດທະນະພິບູນ (2551) ໄດ້ສຶກສາກ່ຽວກັບພຶດຕິກຳຄວາມຮັບຜິດຊອບຂອງນັກສຶກສາຄະນະບໍລິຫານທຸລະກິດມະຫາວິທະຍາໄລສະຫຍາມ ພົບວ່າ ນັກສຶກສາມະຫາວິທະຍາໄລສະຫຍາມມີຄວາມຮັບຜິດ ຊອບ 3 ດ້ານສູງຄື: ດ້ານຄວາມຮັບຜິດຊອບຕໍ່ຕົນເອງ ແລະ ການກະທຳຂອງຕົນເອງ, ຄວາມຮັບຜິດຊອບຕໍ່ການສຶກສາຮ່ຳຮຽນ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ; ສ່ວນດ້ານຄວາມຮັບຜິດ ຊອບຕໍ່ສະຖາບັນແມ່ນຢູ່ໃນລະດັບກາງ. ເພັດຕາວັນ ວັນນະຣະສຸກ (2552) ໄດ້ສຶກສາຄວາມມີວິໄນໃນຕົນເອງຂອງນັກສຶກສາລະດັບປະລິນຍາຕີມະຫາວິທະຍາໄລແຫ່ງຊາດລາວພົບວ່າ: ຄວາມມີວິໄນໃນຕົນເອງຂອງນັກສຶກສາລະດັບປະລິນຍາຕີ ມະຫາວິທະຍາໄລແຫ່ງຊາດໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນແຕ່ລະດ້ານເຫັນວ່າຢູ່ໃນລະດັບສູງໃນ 5 ດ້ານ, ດ້ານຄວາມເປັນຜູ້ນຳ ແມ່ນມີຄ່າສະເລ່ຍສູງສຸດ, ຮອງລົງມາແມ່ນຄວາມຮັບຜິດຊອບ, ຄວາມອົດທົນ, ຄວາມໝັ້ນໃຈໃນຕົນເອງ ແລະ ຄວາມສັດຊື່ຕາມລຳດັບ. ຄວາມມີວິໄນໃນຕົນເອງໂດຍລວມຂອງນັກຮຽນຍິງ ແລະ ນັກຮຽນບໍ່ແຕກຕ່າງກັນ. ນັກສຶກສາທີ່ຂຶ້ນກັບຄະນະວິຊາທີ່ແຕກຕ່າງກັນບໍ່ມີຄວາມແຕກຕ່າງໃນລະບຽບວິໄນຂອງຕົນເອງ. ນັກສຶກສາທີ່ມີຜົນສຳເລັດທາງວິຊາການທີ່ແຕກຕ່າງກັນແລະນັກຮຽນທີ່ເຂົ້າຮ່ວມກິດຈະກຳຂອງນັກຮຽນທີ່ແຕກຕ່າງກັນ ມີລະບຽບວິໄນຂອງຕົນເອງແຕກຕ່າງກັນ ໂດຍມີຄວາມສຳຄັນທາງສະຖິຕິໃນລະດັບ .05. ການຈະນາ ຮ້ອຍນາດ, ດວງແຂ ພິທັກສິນ ແລະ ພິດຊະວິ (2554) ໄດ້ສຶກສາຄວາມມີວິໄນໃນຕົນເອງຂອງນັກສຶກສາພະຍາບານສາດວິທະຍາໄລພະຍາບານບຣົມບຣາຊະຊີນີ ກໍມີຜົນງານການຄົ້ນຄວ້າທີ່ຄ້າຍຄືກັນວ່າ ພຶດຕິກຳຄວາມມີວິໄນໃນຕົນເອງຂອງນັກສຶກສາແມ່ນຢູ່ໃນລະດັບດີ ເຊິ່ງຈະກວມມີດ້ານປະຕິບັດກິດລະບຽບ, ການຕົງຕໍ່ເວລາ, ຄວາມຊື່ສັດ, ບໍ່ເວົ້າຕົວະ, ແຕ່ງກາຍຖືກລະບຽບ ແລະ ເຂົ້າອອກຫໍພັກຕາມເວລາກຳນົດ. ນອກຈາກນັ້ນແລ້ວ, ນັກສຶກສາຜູ້ມີວິໄນໃນຕົນເອງຈະຕ້ອງເປັນຜູ້ມີພາວະຜູ້ນຳ, ເຊື່ອໝັ້ນໃນຕົນເອງ, ມີຄວາມຮັບຜິດຊອບ, ຕັ້ງໃຈຮຽນ ແລະ ປະຕິບັດກົດລະບຽບຂອງສະຖາບັນການສຶກສາອີກດ້ວຍ. ເກສອນ ປີຍະທັດ (2554) ໄດ້ສຶກສາຄວາມຮັບຜິດ ຊອບຕໍ່ຕົນເອງຂອງນັກສຶກສາມະຫາວິທະຍາໄລກະເສມບັນດິດພົບວ່ານັກສຶກສາມີຄວາມຮັບຜິດຊອບຕໍ່ຕົນເອງທັງໂດຍລວມ ແລະ ແຕ່ລະດ້ານຢູ່ໃນລະດັບສູງ. ເມື່ອປຽບທຽບຄວາມຮັບຜິດຊອບກັບຕໍ່ຕົນເອງຂອງນັກສຶກສາຕາມຕົວປ່ຽນເພດພົບວ່ານັກສຶກສາຍິງ ແລະ ຊາຍໂດຍລວມມີຄວາມຮັບຜິດຊອບຕໍ່ຕົນເອງບໍ່ແຕກຕ່າງກັນ. ແນວ ໃດກໍຕາມ, ດ້ານຄວາມມີວິໄນໃນຕົນເອງ ແລະ ດ້ານຄວາມສຳພັນໃນຄອບຄົວແຕກຕ່າງກັນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະ ດັບ.01. ຖ້າຈຳແນກຕາມຄະນະທີ່ສຶກສາພົບວ່າຄະນະວິຊາຕ່າງກັນມີຄວາມຮັບຜິດຊອບຕໍ່ຕົນເອງໂດຍລວມ ແລະ ແຕ່ລະດ້ານແຕກຕ່າງກັນຢ່າງມີຄວາມສາໍຄັນທາງສະຖິຕິທີ່ລະດັບ .01. ຢານິນາດ ສາຍແວວ (2562) ໄດ້ມີການສຳຫຼວດພຶດຕິກຳຄວາມຮັບຜິດຊອບຕໍ່ໜ້າທີ່ຂອງນັກສຶກສາມະຫາວິທະຍາໄລສິລະປະ ກອນ ວິທະຍາເຂດພະລາຊະວັງສະໜາມຈັນ ຈຳນວນນັກສຶກສາ 388 ຄົນ. ຜົນການຄົ້ນຄວ້າພົບວ່ານັກສຶກສາມີພຶດຕິກຳຄວາມຮັບຜິດຊອບຕໍ່ໜ້າທີ່ຢູ່ໃນລະດັບສູງ. ລະດັບຊັ້ນປີທີ່ສຶກສາແຕກຕ່າງກັນ ມີພຶດຕິກຳຄວາມຮັບຜິດຊອບຕໍ່ໜ້າທີ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .05. ເຖິງແນວໃດກໍຕາມ, ເມື່ອປຽບທຽບຕົວປ່ຽນເພດ, ຄະນະ ແລະ ຜົນສຳເລັດທາງການຮຽນພົບວ່າ ພຶດຕິກຳຄວາມຮັບຜິດຊອບຕໍ່ໜ້າທີ່ບໍ່ແຕກຕ່າງກັນ. ຊະໄມພອນ ສີມາ (2562) ໄດ້ສຶກສາພຶດຕິກຳການມີວິໄນໃນຕົນເອງຂອງນັກຮຽນລະດັບຊັ້ນມັດທະຍົມປາຍໂຮງຮຽນພິທັກສຶກສາ ພົບວ່າ ນັກຮຽນມີພຶດຕິກຳການມີວິໄນໃນຕົນເອງຢູ່ໃນລະດັບຫຼາຍ ເມື່ອພິຈາລະນາຕາມເພດເຫັນວ່າ ພຶດຕິກຳການມີວິໄນໃນເພດຍິງ ແລະ ຊາຍ ມີຄວາມແຕກຕ່າງກັນຢ່າງມີຄວາມສຳພັນທາງສະຖິຕິທີ່ລະ ດັບ .05. ໂດຍນັກຮຽນຍິງມີພຶດຕິກຳການມີວິໄນທີ່ສູງກວ່ານັກ ຮຽນຊາຍ.

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບສຳຫຼວດຄວາມຄິດເຫັນກ່ຽວກັບ ພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ເຊິ່ງມີວິທີການດຳເນີນການດັ່ງນີ້:

### *3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ການຄົ້ນຄວ້າຄັ້ງນີ້ໃຊ້ກຸ່ມເປົ້າໝາຍ ເຊິ່ງເປັນປະຊາກອນທັງໝົດຂອງນັກສຶກສາປີທີ 2 ຈຳນວນ 209 ຄົນທີ່ສັງກັດຢູ່ 12

ສາຂາວິຊາພາຍໃນຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ , ສົກສຶກສາ 2022-2023.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມສະແດງຄວາມຄິດເຫັນແບບມາດຕາສ່ວນປະເມີນຄ່າ 5 ລະດັບຂອງລິເຄີດ (Likert, 1932). ເຄື່ອງມືການຄົ້ນຄວ້າທີ່ສ້າງຂຶ້ນມາແມ່ນໄດ້ຈາກການສັງເຄາະເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ. ເມື່ອໄດ້ແບບສອບຖາມແລ້ວ ກໍມີການປຮັບອອກມາແລ້ວສົ່ງໃຫ້ຜູ້ຊ່ຽວຊານ 6 ທ່ານກວດເພື່ອຊອກຫາຄ່າ IOC (Item-Objective Congruence). ແບບສອບຖາມປະກອບມີ 2 ຕອນຄື: 1) ແບບສອບຖາມຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ເຊິ່ງມີລັກສະນະແບບກວດສອບລາຍການລວມມີ: ເພດ, ທີ່ຢູ່ອາໄສ ແລະ ສາຂາວິຊາຮຽນ; 2) ແບບສອບສອບຖາມກ່ຽວກັບພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາ ເຊິ່ງມີລວມມີ 5 ດ້ານຄື: ດ້ານຄວາມຮັບຜິດຊອບ, ດ້ານຄວາມຕົງຕໍ່ເວລາ, ດ້ານດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ, ດ້ານປະຕິບັດກົດລະບຽບ, ແລະ ດ້ານແຮງຈູງໃຈ.

*3.3 ວິທີເກັບກຳຂໍ້ມູນ*

ຫຼັງຈາກໄດ້ຮັບໃບອະນຸມັດເກັບຂໍ້ມູນແລ້ວ ຄະນະຜູ້ຄົ້ນຄວ້າໄດ້ຕິດຕໍ່ປະສານງານ ແລະ ນັດໝາຍເວລາທີ່ເໝາະສົມກັບອາຈານປະຈຳວິຊາເພື່ອຂໍອະນຸຍາດເກັບຂໍ້ມູນ. ເນື່ອງຈາກການເກັບຂໍ້ມູນດຳເນີນໃນໄລຍະພາກຮຽນທີ 2 (ມີນາ-ກໍລະກົດ) ສົກສຶກສາ 2022-2023 ທີມງານຈຶ່ງສາມາດຕິດຕໍ່ກັບອາຈານໂດຍກົງໂດຍຂໍເວລາໃນຊ່ວງທ້າຍຊົ່ວໂມງຮຽນຂອງວິຊາຮຽນຮ່ວມທີ່ມີນັກສຶກສາຈາກຫຼາຍສາຂາວິຊາ ເຊັ່ນ: ຈິດຕະວິທະຍາພັດທະນາການ, ສະຖິຕິພື້ນຖານ ແລະ ອື່ນໆ. ຈາກນັ້ນຄະນະທີມງານໄດ້ນຳໃຊ້ເອົາແບບສອບຖາມທີ່ກຽມໄວ້ໃນລະບົບກູເກີນຟອມ (google form) ແລະ ແຈກຢາຍໃຫ້ນັກສຶກສາດ້ວຍວິທີການສົ່ງລິ້ງໃຫ້ຄະນະຫ້ອງຂອງແຕ່ລະສາຂາຮຽນ ເພື່ອໃຫ້ເຂົາເຈົ້າແຈກຢາຍໃນກຸ່ມຫ້ອງຂອງຕົນ. ກ່ອນທີ່ນັກສຶກສາຈະເຂົ້າເຖິງລິ້ງເພື່ອຕອບແບບສອບຖາມຜ່ານໂທລະສັບມືຖື ຫຼື ອຸປະກອນອີເລັກໂທຣນິກອື່ນໆ ຄະນະຜູ້ຄົ້ນຄວ້າໄດ້ອະທິບາຍລາຍລະອຽດກ່ຽວກັບຈຸດປະສົງຂອງການຄົ້ນຄວ້າ ແລະ ຂໍ້ມູນສຳຄັນ. ພາຍໃຕ້ການອຳນວຍຄວາມສະດວກຂອງອາຈານປະຈຳວິຊາ ແລະ ການຊ່ວຍເຫຼືອຈາກຄະນະຫ້ອງ, ການເກັບກຳຂໍ້ມູນກໍດຳເນີນໄປດ້ວຍດີ ແລະ ສຳເລັດຕາມເວລາ.

*3.4 ການວິເຄາະຂໍ້ມູນ*

ຫຼັງຈາກທີ່ກວດສອບຄວາມຮຽບຮ້ອຍຂອງແບບສອບຖາມໃນລະບົບກູເກີນຟອມ (google form) ພົບວ່າ: ຈຳນວນຜູ້ຕອບແບບສອບຖາມທີ່ຄົບຖ້ວນ ແລະ ເກັບຄືນມາໄດ້ລວມມີທັງໝົດ 173 ຊຸດ (ຄົນ). ຈາກນັ້ນຄະນະຜູ້ຄົ້ນຄວ້າກໍໄດ້ນຳມາວິເຄາະໂດຍໃຊ້ຄ່າທາງສະຖິຕິ ແລະ ຂັ້ນຕອນການດຳເນີນການລວມມີ 1) ຄິດໄລ່ຄ່າສະເລ່ຍ (μ) ແລະ ຄ່າຜັນປ່ຽນມາດຕະຖານ (σ) ສຳລັບຂໍ້ມູນຈາກແບບສອບຖາມຕອນທີ 2 ເພື່ອສຶກສາລະດັບຄວາມຄິດເຫັນຂອງນັກສຶກສາກ່ຽວກັບພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ; 2) ປຽບທຽບຄວາມແຕກຕ່າງລະຫວ່າງຄ່າສະເລ່ຍຂອງແຕ່ລະດ້ານໃນຕົວປ່ຽນຕາມແລ້ວເອົາມາສະຫຼຸບຄືນ ແລະ ສະເໜີແນະແນວທາງແກ້ໄຂປັບປຸງໃນອະນາຄົດ.

## 4. ຜົນການຄົ້ນຄວ້າ

*4. 1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ*

ຈຳນວນຜູ້ຕອບແບບສອບຖາມທີ່ຄົບຖ້ວນ ແລະ ເກັບຄືນມາໄດ້ລວມມີທັງໝົດ 173 ຊຸດ (ຄົນ) ເຊິ່ງມີລາຍລະອຽດດັ່ງນີ້:

ຕາຕະລາງ 1. ຈຳນວນຜູ້ໃຫ້ຂໍ້ມູນທີ່ເກັບໄດ້ຕົວຈິງ

| ລດ | ເພດ | ຈຳນວນ | ສ່ວນຮ້ອຍ (%) |
|---|---|---|---|
| 1 | ຍິງ | 116 | 67.05 |
| 2 | ຊາຍ | 57 | 32.95 |
| ***ລວມ*** | | ***173*** | ***100.00*** |

ຈາກການວິເຄາະຂໍ້ມູນຢູ່ຕາຕະລາງທີ 1 ພົບວ່າ ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນນັກສຶກສາເພດຍິງລວມມີຈຳນວນ 116 ຄົນ ກວມ 67.05% ແລະ ນັກສຶກສາເພດຊາຍມີ 57 ຄົນ ຄິດເປັນປະມານ 32.36%. ຖ້າແຍກຜູ້ຕອບແບບສອບຖາມໂດຍອີງຕາມທີ່ຢູ່ອາໄສພົບວ່າ ສ່ວນຫຼາຍແມ່ນອາໄສເຮືອນຕົນເອງ (32.36%), ຮອງລົງມາກໍແມ່ນຢູ່ຫໍພັກ (24.85%), ຫ້ອງເຊົ່າ (22.54%) ແລະ ພັກຢູ່ກັບພີ່ນ້ອງ (20.23%). ຖ້າພິຈາລະນາຕາມສາຍຮຽນພົບວ່າ ຄູພາສາລາວ-ວັນນະຄະດີກວມເອົາອັດຕາສ່ວນຫຼາຍທີ່ສຸດປະມານ 12.71%, ຮອງລົງມາແມ່ນສາຂາຄູຄະນິດສາດ ແລະ ຄູການເມືອງ (12.13%) ແລະ ສາຂາທີ່ມີນັກສຶກສາໜ້ອຍທີ່ສຸດແມ່ນ ຈິດຕະວິທະຍາການສຶກສາ ແລະ ຄູຊີວະສາດ (3.46%).

### *4.2 ຜົນການວິເຄາະຂໍ້ມູນກ່ຽວກັບພຶດຕິກໍາດ້ານຕ່າງໆ*

ຕາຕະລາງ 2. ຜົນການວິເຄາະພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

| **ລ/ດ** | **ພຶດຕິກໍາດ້ານຕ່າງໆ** | **ລະດັບການປະຕິບັດຂອງນັກສຶກສາ** | | |
|---|---|---|---|---|
| | | μ | σ | ແປຜົນ |
| 1 | ດ້ານຄວາມຮັບຜິດຊອບ | 3.04 | 1.17 | ປານກາງ |
| 2 | ດ້ານຄວາມຕົງຕໍ່ເວລາ | 3.69 | 1.05 | ຫຼາຍ |
| 3 | ດ້ານຄວາມເຊື່ອໝັ້ນໃນຕົນເອງ | 3.48 | 1.04 | ປານກາງ |
| 4 | ດ້ານປະຕິບັດກົດລະບຽບ | 3.98 | 0.99 | ຫຼາຍ |
| 5 | ດ້ານແຮງຈູງໃຈໃຝ່ສໍາເລັດ | 3.61 | 1.13 | ຫຼາຍ |
| ລວມ | | ***3.56*** | ***1.07*** | ***ຫຼາຍ*** |

ເມື່ອພິຈາລະນາເຖິງພຶດຕິກໍາຄວາມມີວິໄນ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ໂດຍລວມພົບວ່າ ຢູ່ໃນລະດັບປະຕິບັດຫຼາຍ. ແນວໃດກໍຕາມ, ຖ້າແຍກພິຈາລະນາໃນແຕ່ລະດ້ານສາມາດຈັດລຽງລໍາດັບຈາກຄ່າສະເລ່ຍແຕ່ສູງຫາຕໍ່າດັ່ງນີ້: ດ້ານການປະຕິບັດກົດລະບຽບ ($\mu$= 3.89, $\sigma$= 0.99), ດ້ານຄວາມຕົງຕໍ່ເວລາ ($\mu$= 3.69, $\sigma$= 1.05), ດ້ານແຮງຈູງໃຈໃຝ່ສໍາເລັດ ($\mu$= 3.04, $\sigma$= 1.11), ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ ($\mu$= 3.48, $\sigma$= 1.01) ແລະ ດ້ານຄວາມຮັບຜິດຊອບ ($\mu$= 3.04, $\sigma$= 1.11) ຕາມລໍາດັບ. ດ້ານທີ່ມີຄ່າເລ່ຍຕໍ່າທີ່ສຸດແມ່ນດ້ານຄວາມເຊື່ອໝັ້ນໃນຕົນເອງ ແລະ ດ້ານຄວາມຮັບຜິດຊອບ ເຊິ່ງວ່າຢູ່ໃນລະດັບປະຕິບັດປານກາງ ເຊິ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 3. ຜົນການວິເຄາະຂໍ້ມູນດ້ານຄວາມຮັບຜິດຊອບ

| **ດ້ານຄວາມຮັບຜິດຊອບ** | **ລະດັບການປະຕິບັດຂອງນັກສຶກສາ** | | |
|---|---|---|---|
| | μ | σ | ແປຜົນ |
| ຂ້າພະເຈົ້າຕັ້ງໃຈເຮັດວຽກທີ່ໄດ້ຮັບມອບໝາຍໃຫ້ສໍາເລັດດ້ວຍຄວາມຮັບຜິດຊອບສູງ | 2.52 | 1.18 | ໜ້ອຍ |
| ຂ້າພະເຈົ້າຕັ້ງໃຈຟັງໃນເວລາຄູອະທິບາຍ ໂດຍບໍ່ເອົາວຽກອື່ນ ຫຼື ວິຊາອື່ນມາເຮັດໃນຊົ່ວໂມງຮຽນ | 2.09 | 1.19 | ໜ້ອຍ |
| ຂ້າພະເຈົ້າສົ່ງວຽກບ້ານທີ່ອາຈານມອບໝາຍໃຫ້ຄົບຖ້ວນ | 3.82 | 1.05 | ຫຼາຍ |
| ຂ້າພະເຈົ້າກວດເບິ່ງຄວາມຖືກຕ້ອງຂອງວຽກບ້ານ ຫຼື ວຽກມອບໝາຍທຸກຄັ້ງ | 2.22 | 1.25 | ໜ້ອຍ |
| ຂ້າພະເຈົ້າອະນາໄມຫ້ອງຮຽນ, ຂອບເຂດຮັບຜິດຊອບໃຫ້ສະອາດໂດຍບໍ່ຕ້ອງຖ້າຄູອາຈານບອກ | 2.18 | 1.25 | ໜ້ອຍ |
| ຂ້າພະເຈົ້າຍິນດີເຂົ້າຮ່ວມກິດຈະກໍາຕ່າງໆ ທີ່ທາງຄະນະສຶກສາສາດ ແລະ ມຊ ຈັດຂຶ້ນ | 3.92 | 1.10 | ຫຼາຍ |
| ຂ້າພະເຈົ້າຈົດກ່າຍບົດຮຽນຄືນນໍາໝູ່ເວລາຂາດຮຽນ | 3.67 | 1.14 | ຫຼາຍ |
| ຂ້າພະເຈົ້າຖາມຄູອາຈານເວລາທີ່ບໍ່ເຂົ້າໃຈບົດຮຽນ | 3.90 | 1.08 | ຫຼາຍ |
| ລວມ | ***3.04*** | ***1.11*** | ***ປານກາງ*** |

ຈາກຕາຕະລາງຂ້າງເທິງພົບວ່າ ພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ໂດຍລວມແມ່ນມີການປະຕິບັດຢູ່ໃນລະດັບກາງ. ເມື່ອພິຈາລະເປັນຂໍ້ໆ ກໍພົບວ່າ ຍັງມີຫຼາຍຂໍ້ທີ່ມີການປະຕິບັດໃນລະດັບໜ້ອຍ ເຊິ່ງຂໍ້ທີ່ໜ້ອຍທີ່ສຸດແມ່ນ ຂ້າພະເຈົ້າຕັ້ງໃຈຟັງໃນເວລາຄູອະທິບາຍ ໂດຍບໍ່ເອົາວຽກອື່ນ ຫຼື ວິຊາອື່ນມາເຮັດໃນຊົ່ວໂມງຮຽນ.

## 5. ອະພິປາຍຜົນ

ຜົນການຄົ້ນຄວ້າພົບວ່າ ພຶດຕິກໍາຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດສົກສຶກສາ 2022-2023 ໂດຍລວມຢູ່ໃນລະດັບປະຕິບັດຫຼາຍ. ເມື່ອພິຈາລະນາເປັນແຕ່ລະດ້ານຍ່ອຍສາມາດຈັດລຽງ ລໍາດັບຈາກຄ່າສະເລ່ຍແຕ່ສູງຫາຕໍ່າດັ່ງນີ້: ດ້ານການປະຕິບັດກົດລະບຽບ, ດ້ານຄວາມຕົງຕໍ່ເວລາ, ດ້ານແຮງຈູງໃຈໃຝ່ສໍາເລັດ, ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ ແລະ ດ້ານຄວາມຮັບຜິດຊອບຕາມລໍາດັບ. ທັງນີ້ອາດຈະເປັນບົ່ງຊີ້ວ່າ ຄະ ນະສຶກສາສາດ ເປັນສະຖາບັນການສຶກສາໜຶ່ງທີ່ສໍາຄັນໃນການເຝິກຝົນຫຼໍ່ຫຼອມໃຫ້ນັກສຶກສາມີຄວາມມີວິໄນໃນຕົນເອງ ແລະ ມີຄວາມຮັບຜິດຊອບຕໍ່ວຽກງານການຮຽນການສອນ ເພື່ອທີ່ຈະສາ ມາດສ້າງຊັບພະຍາກອນມະນຸດ ຕາມແຜນພັດທະນາຂະແໜງ ການສຶກສາ ແລະ ກິລາ 2021-2025 ໃຫ້ມີຄວາມຮູ້ ຄວາມ

ສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ , ມີນ້ຳໃຈຮັກຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບດ້ານຮ່າງກາຍ ແລະ ຈິດໃຈທີ່ດີ, ມີຄວາມສາມັກຄີພາຍໃນຊາດ, ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນແຮງງານທີ່ມີຄຸນະພາບ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວ ທາງດ້ານເສດຖະກິດຂອງປະ ເທດ ແລະ ພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2021-2025). ແຜນພັດທະນາເສດຖະກິດ ແລະ ສັງຄົມສະບັບທີ 4, 5, ແລະ ສະບັບທີ 6 ກໍໄດ້ເນັ້ນໜັກວ່າ ການພັດທະນາຄົນເປັນສູນກາງຂອງການພັດທະນາ ໂດຍເນັ້ນການພັດທະນາມະນຸດໃຫ້ມີຄຸນະພາບ ພ້ອມທັງສ້າງຄົນໃຫ້ເປັນຄົນດີ, ຄົນເກັ່ງ ພ້ອມດ້ວຍການຈັດການສຶກສາໃນການພັດທະນາຈິດໃຈ, ສົ່ງເສີມດ້ານສິລະທຳໂດຍສະເພາະການໃຫ້ຜູ້ຮຽນມີວິໄນໃນຕົນເອງ, ມີຄວາມຮັບຜິດ ຊອບຕໍ່ໜ້າທີ່ຂອງຕົນ, ມີຄວາມໝັ້ນໃຈໃນການທີ່ຈະກະທຳສິ່ງດີໆໃຫ້ເກີດຂຶ້ນແກ່ຕົນເອງ ແລະ ສັງຄົມ.

ການທີ່ນັກສຶກສາມີພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນໃນລະດັບຫຼາຍ ກໍອາດຈະເກີດຂຶ້ນຈາກການຫຼໍ່ຫຼອມລັກສະນະທີ່ເພິ່ງປາຖະໜາຈາກສະຖາບັນຫຼັກ 3 ແຫ່ງ ຄື: ສະຖາບັນຄອບຄົວ, ສະຖາບັນສາສະໜາ ແລະ ສະຖາບັນການສຶກສາ. ສົມທະນາ ພາກບົງກົດ ແລະ ຄະນະໄດ້ກ່າວວ່າ ນອກຈາກຕົວບຸກຄົນແລ້ວ, ສິ່ງແວດລ້ອມກໍມີສ່ວນຊ່ວຍໃຫ້ການບຸກຄົນທີ່ຈະມີພຶດຕິກຳທີ່ດີ ແລະ ມີລະບຽບວິໄນໃນຕົນເອງ ເນື່ອງຈາກວ່າ ສິ່ງແວດລ້ອມທີ່ດີຈະຊ່ວຍໃຫ້ສົ່ງເສີມໃຫ້ເກີດການຮຽນຮູ້ ແລະ ມີການພັດທະນາໃນຕົນເອງ. ຜົນການຄົ້ນຄວ້າຄັ້ງນີ້ສອດຄ່ອງກັບຜົນການຄົ້ນຄວ້າຂອງ ເພັດຕາວັນ ວັນນະຣະສຸກ (2552) ໄດ້ສຶກສາຄວາມມີວິໄນໃນຕົນເອງຂອງນັກສຶກສາລະດັບປະລິນຍາຕີມະຫາວິທະຍາໄລແຫ່ງຊາດລາວ (ມຊ) ພົບວ່າ: ຄວາມມີວິໄນໃນຕົນເອງຂອງນັກສຶກສາລະດັບປະລິນຍາຕີ, ມຊ ໂດຍລວມຢູ່ໃນລະດັບຫຼາຍ. ເມື່ອພິຈາລະນາເປັນແຕ່ລະດ້ານ ເຫັນວ່າຢູ່ໃນລະດັບສູງໃນ 5 ດ້ານ, ດ້ານຄວາມເປັນຜູ້ນຳແມ່ນມີຄ່າສະເລ່ຍສູງສຸດ, ຮອງລົງມາແມ່ນຄວາມຮັບຜິດຊອບ, ຄວາມອົດທົນ, ຄວາມໝັ້ນໃຈໃນຕົນເອງ ແລະ ຄວາມສັດຊື່ຕາມລຳດັບ. ນອກຈາກນີ້, ຍັງມີຜົນງານການຄົ້ນຄວ້າທີ່ສະໜັບສະໜູນກັນ ເຊິ່ງພົບວ່າພຶດຕິກຳຄວາມມີວິໄນໃນຕົນເອງຢູ່ໃນລະດັບປະຕິບັດຫຼາຍ ຫຼື ລະດັບດີ ເຊັ່ນ: ຂວັນໃຈ ອຸນທະວັດທະນະພິບູນ (2551), ການຈະນາ ຮ້ອຍນາດ, ດວງແຂ ພິທັກສົນ ແລະ ພິດຊະວີ (2554), ສຸເມດ ດ້ວງຈູ, (2567), ເກສອນ ປີຍະທັດ (2554) ແລະ ຊະໄມພອນ ສີມາ (2562).

ຜົນການຄົ້ນຄວ້າຍັງພົບອີກວ່າ ດ້ານທີ່ມີລະດັບການປະຕິບັດໃນລະດັບປານກາງລວມມີ ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ ($\mu$= 3.48, $\sigma$= 0.99) ແລະ ດ້ານຄວາມຮັບຜິດຊອບ ($\mu$= 3.04, $\sigma$= 1.11) ເຊິ່ງມີຄວາມສອດຄ່ອງກັບບົດຄົ້ນຄວ້າຂອງຂອງ ອຳນາດ ຈັນທະຣະມະຫາ (2542) ທີ່ສຶກສາຄວາມມີວິໄນຂອງນັກສຶກສາແຂວງຮ້ອຍເອັດພົບວ່າ ຄວາມມີວິໄນໃນຕົນເອງຂອງນັກສຶກສາແມ່ນຢູ່ໃນລະດັບປານກາງ. ເມື່ອພິຈາລະນາຕາມກົມສັງກັດພົບວ່າ ກົມອາຊີສຶກສາ ແລະ ສຳນັກງານຄະນະກຳມະການ ການສຶກສາເອກະຊົນມີຄວາມມີໄນໃນຕົນເອງແມ່ນຢູ່ໃນລະດັບຕ່ຳ. ສ່ວນກົມອື່ນໆ ແມ່ນຢູ່ໃນລະດັບກາງ. ເມື່ອແຍກຍ່ອຍຂອງແຕ່ລະດ້ານພົບວ່າ ດ້ານຄວາມເຊື່ອໝັ້ນໃນຕົນເອງ, ດ້ານຄວາມຕົງຕໍ່ເວລາ ແລະ ດ້ານຄວາມເສຍສະຫຼະກໍຢູ່ໃນລະດັບປານກາງເຊັ່ນດຽວກັນ. ຄວາມຮັບຜິດຊອບ ແລະ ຄວາມເຊື່ອໝັ້ນໃນຕົນເອງຢູ່ໃນລະດັບປານກາງ ອາດຈະເນື່ອງມາຈາກປະສົບການໃນໄວຮຽນເຊິ່ງຫາກໍຂ້າມຜ່ານໄວລຸ້ນມາ ທີ່ຍັງມີທັກສະການໃຊ້ຊີວິດຢ່າງມີອິດສະຫຼະ ຈຶ່ງເຮັດໃຫ້ມີຄວາມຮັບຜິດຊອບ ແລະ ປະຕິບັດກົດລະບຽບທາງສັງຄົມຢ່າງເໝາະສົມໄດ້ພຽງພໍໃຊ້ໄດ້ເທົ່ານັ້ນ ດັ່ງນັ້ນ, ການພັດທະນາວິໄນໃນຕົນເອງ ຈຶ່ງຖືເປັນປັດໄຈສຳຄັນໃນສະຖານການສຶກສາ, ໃຊ້ເປັນແນວທາງໃນການຮຽນຮູ້ ແລະ ດຳລົງຊີວິດຢູ່ຮ່ວມກັນໄດ້ຢ່າງມີຄວາມສຸກສິ່ງຜົນໃຫ້ເກີດຄວາມຮັບຜິດຊອບ ເຊິ່ງມີປະໂຫຍດໃຫ້ທັງຕົນເອງ ແລະ ສັງຄົມ (ກະເສມສັກ, 2021) ເຊິ່ງຄຸນລັກສະນະຂອງຜູ້ມີວິໄນໃນຕົນເອງຈະຕ້ອງມີຄວາມຮັບຜິດຊອບ, ບໍ່ມີຄວາມກັງວົນ ຫຼື ກັງວົນເລັກນ້ອຍ, ພາກພຽນພະຍາຍາມ, ອົດທົນ ແລະ ມີເຫດຜົນ (Wiggins, 1971). ເຖິງແນວໃດກໍຕາມ , ພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມຊ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ຈຶ່ງເປັນສັນຍານທີ່ດີວ່າ ນັກສຶກສາເຫຼົ່ານີ້ມີຄວາມພ້ອມ ແລະ ຄວາມຮັບຜິດຊອບຕໍ່ການຮຽນຮູ້ ແລະ ພັດທະນາຕົນເອງໃນສາຂາທີ່ຕົນເອງເລືອກຮຽນ. ຄຸນສົມບັດດັ່ງກ່າວຈະເປັນປັດໄຈຊຸກຍູ້ທີ່ສຳຄັນໃຫ້ກັບການຝຶກຫັດວິຊາຊີບ ແລະ ຮຽນບົດໂຄງການຈົບຊັ້ນໃນອະນາຄົດ. ນັກສຶກສາຈະມີໂອກາດທີ່ຈະປະສົບຜົນສຳເລັດໃນການສຶກສາ ແລະ ອາຊີບທີ່ກ່ຽວຂ້ອງໃນອະນາຄົດຫຼາຍຂຶ້ນ ແລະ ສະແດງໃຫ້ເຫັນເຖິງບາງອົງປະກອບມີຄວາມສຳພັນ ແລະ ກ່ຽວຂ້ອງກັນ ຫຼື ມີຄວາມໝາຍໄປໃນທິດທາງດຽວກັນ ເປັນອົງປະກອບວິໄນດຽວກັນ.

## 6. ສະຫຼຸບຜົນ

ພຶດຕິກຳຄວາມມີວິໄນ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາປີທີ 2 ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ສົກສຶກສາ 2022-2023 ໂດຍລວມແມ່ນຢູ່ໃນລະດັບ

ປະຕິບັດຫຼາຍ. ເມື່ອພິຈາລະນາແຕ່ລະດ້ານພົບວ່າ ດ້ານທີ່ມີຄ່າສະເລ່ຍສູງສຸດແມ່ນດ້ານການປະຕິບັດກົດລະບຽບ ຮອງລົງມາແມ່ນດ້ານຄວາມຕົງຕໍ່ເວລາ, ດ້ານແຮງຈູງໃຈໃຝ່ສຳເລັດ. ດ້ານຄວາມເຊື່ອໝັ້ນໃນຕົນເອງ ແລະ ດ້ານຄວາມຮັບຜິດຊອບແມ່ນຢູ່ໃນລະດັບປະຕິບັດປານກາງ. ດ້ານທີ່ມີຄ່າສະເລ່ຍໃນລະດັບປານກາງແມ່ນດ້ານຄວາມຮັບຜິດຊອບ ແລະ ດ້ານຄວາມເຊື່ອໝັ້ນໃນຕົນເອງ. ເມື່ອລົງເລິກເຂົ້າໄປດ້ານຄວາມຮັບຜິດຊອບພົບວ່າ ມີຫຼາຍຂໍ້ທີ່ນັກສຶກສາມີການປະຕິບັດໃນລະດັບໜ້ອຍ ເຊັ່ນ: ຂ້າພະເຈົ້າຕັ້ງໃຈເຮັດວຽກທີ່ໄດ້ຮັບມອບໝາຍໃຫ້ສຳເລັດ ດ້ວຍຄວາມຮັບຜິດຊອບສູງ, ຕັ້ງໃຈຟັງຄູອະທິບາຍ ໂດຍບໍ່ເອົາວຽກອື່ນ ຫຼືວິຊາອື່ນມາເຮັດໃນຊົ່ວໂມງຮຽນ. ເມື່ອປຽບທຽບຕາມຕົວປ່ຽນເພດພົບວ່າ ຄວາມມີວິໄນໃນຕົນເອງຂອງນັກສຶກສາໂດຍລວມຂອງສຶກສາຍິງ ແລະ ຊາຍແມ່ນບໍ່ແຕກຕ່າງກັນ. ນັກສຶກສາທີ່ຮຽນສາຂາວິຊາແຕກຕ່າງກັນ ກໍບໍ່ມີຄວາມແຕກຕ່າງກັນທາງດ້ານພຶດຕິກຳຄວາມມີວິໄນໃນຕົນເອງ.

## 7. ຂໍ້ສະເໜີແນະ

ຈາກຜົນການຄົ້ນຄວ້າດັ່ງກ່າວ, ຄະນະຜູ້ຄົ້ນຄວ້າຈຶ່ງຂໍສະເໜີແນະດັ່ງນີ້:

1) ດ້ານຄວາມເຊື່ອໝັ້ນຕໍ່ຕົນເອງ: ຄູອາຈານຄວນຈັດກິດຈະກຳທີ່ຫຼາກຫຼາຍເພື່ອສົ່ງເສີມໃຫ້ນັກສຶກສາມີສ່ວນຮ່ວມຫຼາຍຂຶ້ນ ເຊິ່ງເປັນການເປີດໂອກາດໃຫ້ນັກສຶກສາໄດ້ພັດທະນາຄວາມສາມາດຂອງຕົນອັນຈະສົ່ງຜົນຕໍ່ການເສີມສ້າງຄວາມໝັ້ນໃຈໃນຕົນເອງໃຫ້ເຂົາເຈົ້າ.

2) ດ້ານຄວາມຮັບຜິດຊອບ: ຄູອາຈານຄວນເຂັ້ມງວດໃຫ້ນັກສຶກສາມີຄວາມເປັນລະບຽບທຸກຄັ້ງ. ກ່ອນຈະສົ່ງວຽກບ້ານ ຫຼືວຽກມອບໝາຍຕ້ອງມີການກວດການຄືນໃຫ້ລະອຽດຖີ່ຖ້ວນຄືນເພື່ອຫຼີກເວັ້ນສິ່ງຜິດພາດຕ່າງໆ. ຄູຄວນມີການຕິດຕາມກວດກາຕໍ່ເນື່ອງເພື່ອສັງເກດການປ່ຽນແປງຂອງນັກສຶກສາໃນດ້ານຄວາມຮັບຜິດຊອບຕໍ່ການຮຽນ. ນອກຈາກນັ້ນ, ຄູອາຈານຄວນນຳເຕັກນິກວິທີການເສີມແຮງໄປໝູນໃຊ້ກັບລາຍວິຊາຕ່າງໆ ເພື່ອປັບປຸງ ແລະ ສົ່ງເສີມພຶດຕິກຳດ້ານຄວາມຮັບຜິດຊອບຂອງນັກສຶກສາ.ຈັດຕັ້ງການອອກແຮງງານລວມ ອະນາໄມຂອບເຂດຮັບຜິດຊອບເປັນປົກກະຕິເພື່ອຍົກສູງຄວາມຮັບຜິດຊອບ ແລະປູກຝັງວິໄນໃນການຮັກສາຄວາມສະອາດໃນສະຖານການສຶກສາ.

## 8. ຂໍ້ຈຳກັດຂອງການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ຄະນະຜູ້ຄົ້ນຄວ້າໄດ້ພົບຫຍຸ້ງຍາກດັ່ງ ນີ້:

- ຜູ້ຕອບແບບສອບຖາມຈຳນວນໜຶ່ງຍັງບໍ່ຄຸ້ນເຄີຍກັບແບບສອບຖາມ google form ດັ່ງນັ້ນຈຶ່ງບໍ່ສາມາດເກັບແບບສອບຖາມຄືນໄດ້ເຕັມເມັດເຕັມໜ່ວຍ;
- ບົດຄົ້ນຄວ້າພາຍໃນປະເທດກ່ຽວກັບພຶດຕິກຳຄວາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຂອງນັກສຶກສາ ຍັງມີຈຳກັດຫຼາຍ ຈຶ່ງເຮັດໃຫ້ແຫຼ່ງຂໍ້ມູນທີ່ສະໜັບສະໜູນຜົນການຄົ້ນຄວ້າກໍມີລັກສະນະຈຳກັດໄປນຳ.

ຈາກຂໍ້ຈຳກັດຂ້າງເທິງ, ຄະນະຜູ້ຄົ້ນຄວ້າຈຶ່ງຂໍສະເໜີແນະແນວທາງຄົ້ນຄວ້າຕໍ່ໜ້າດັ່ງນີ້: ມີການແນະນຳ ຫຼື ອົບຮົມກ່ຽວກັບວິຊາການນຳໃຊ້ google form ເພື່ອຮັບປະກັນໃນການຕອບແບບສອບຖາມໃຫ້ຖືກຕ້ອງ ແລະ ສົ່ງໃຫ້ຄົບຖ້ວນ; ເພີ່ມທະວີການຄົ້ນຄວ້າກ່ຽວກັບຫົວຂໍ້ດັ່ງກ່າວໃຫ້ຫຼາຍຂຶ້ນ ດ້ວຍກຸ່ມຕົວຢ່າງທີ່ກວມເອົານັກສຶກສາທຸກປີຮຽນທີ່ວຄະນະສຶກສາສາດ ແລະ ຄະນະວິຊາຕ່າງໆ; ຄວນມີການປຽບທຽບພຶດຕິກຳຄາມມີວິໄນໃນຕົນເອງ ແລະ ຄວາມຮັບຜິດຊອບຕໍ່ການຮຽນຂອງນັກສຶກສາຈາກຕົວປ່ຽນຕ່າງໆ .

## 9. ເອກະສານອ້າງອີງ


ເກສອນ ປີຍະທັດ. (2554). ການສຶກສາຄວາມຮັບຜິດຊອບຕໍ່ຕົນເອງຂອງນັກສຶກສາມະຫາວິທະຍາໄລສະເສມບັນດິດ (ປະລິນຍາຕີ), ມະຫາວິທະຍາໄລສີນະຄະຣິນວິໂຣດ, ກຸງເທບມະຫານະຄອນ.

ກະຊວງສຶກສາທິການ ແລະ ກິລາ. (2011). *ທິດທາງໜ້າທີ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VII (2011-2015)* ນະຄອນຫຼວງວຽງຈັນ: ໂຮງພິມແຫ່ງລັດ.

ການຈະນາ ຣ້ອຍນາດ, ດວງແຂ ພິທັກສິນ & ພິດຊະວີ ສິນສະຫວັດ. (2554). *ຄວາມມີວິໄນໃນຕົນເອງຂອງນັກສຶກສພະຍາບານສາດວິທະຍາໄລພະຍາບານຣາຊະຊົນນະນີ, ຣາຊະບູຣີ.* ບົດຄວາມນຳສະເໜີຢູ່ກອງປະຊຸມທາງວິຊາການຂອງມະຫາວິທະຍາໄລກະເສດສາດຄັ້ງທີ 49 ກຸງເທບມະຫານະຄອນ.

ຂວັນໃຈ ອຸນທະວັດທະນະພິບູນ. (2551). *ສຶກສາພຶດຕິກຳຄວາມຮັບຜິດຊອບຂອງນັກສຶກສາຄະນະບໍລິຫານທຸລະກິດມະຫາວິທະຍາໄລສະຫຍາມ.* ມະຫາວິທະຍາໄລສະຫຍາມ: ກຸງເທບ ເຂົ້າເຖິງວັນທີ 12.3.2023 https://doi.nrct.go.th/ListDoi/listDetail?Resolve_DOI=10.14458/SIAM.res.2008.18

ສຸພະວັນ ທອງລາດ. (2021). *ການພັດທະນາແນວທາງເສີມສ້າງວິໄນໃນຕົນເອງຂອງນັກຮຽນ ສັງກັດສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາກາລະສິນ ເຂດ 3.* [ວິທະຍານິພົນ ປະລິນຍາການສຶກສາມະຫາບັນດິດ ສາຂາບໍລິຫານການສຶກສາ ແລະ ພັດທະນາການສຶກສາ, ມະຫາວິທະຍາໄລ ມະຫາສາຣະຄາມ], ມະຫາສາຣະຄາມ.

ສຸເມດ ດ້ວງຈູ. (2567). ປັດໄຈທີ່ສົ່ງຜົນຕໍ່ຄວາມມີວິໄນໃນຕົນເອງຂອງນັກສຶກສາອາຊີວະສຶກສາເອກະຊົນໃນກຸງເທບມະຫານະຄອນ. *Journal of Social Sciences Mahamakut Buddhist University*, Vol.7 (2).

ເສີມສັກ ວິສາລາພອນ (2550). *ວິໄນນັກຮຽນ ສາຣານຸກົມວິຊາຊີບຄູ ສະເຫຼີມພະກຽດ ພະບາດສົມເດັດພະເຈົ້າຢູ່ຫົວ ເນື່ອງໃນໂອກາດສະຫຼອງສິຣິຣາຊະສົມບັດຄົບຮອບ 60 ປີ.* ກຸງເທບ: ສຳນັກງານເລຂາທິການຄຸຣຸສະພາ.

ຊົມ ພູມີພາກ. (2532). *ຈິດຕະວິທະຍາການຮຽນການສອນ.* ກຸງເທບ: ໄທວັດທະນາສືສາ.

ຊະໄມພອນ ສີມາ. (2562). *ພຶດຕິກຳຄວາມມີວິໄນໃນຕົນເອງຂອງນັກຮຽ ນລະດັບມັດທະຍົມຕອນປາຍ ໂຮງຮຽນກອນພິທັກສຶກສາ.* ການວິໄຈລາຍບຸກຄົນ. ເຂົ້າເຖິງວັນທີ 15 ມັງກອນ 2023.https://www.researchgate.net/publication /341999507_phvtik rrmkarmiwinaynitnxengkhxngnakreiynradabchanmathymsuksatxnplay_rongreiynkrphithakssuksa.

ທອງຄຳ ອ່ອນມະນີສອນ. (2008). *ວັດຈະນານຸກົມ.* ຫໍສະໝຸດແຫ່ງຊາດ, ນະຄອນຫຼວງວຽງຈັນ.

ບຸນຊົມ ສີສະອາດ. (2528). ວິໄນໃນຕົນເອງ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ. *ວາລະສານການວັດຜົນການສຶກສາ*, ມະຫາວິທະຍາໄລມະຫາສາຣະຄາມ.

ປະພາພັນ ອ່ຽມສຸພາສິດ. (2532). *ການກຽມຄວາມພ້ອມດ້ານລັກສະນະນິໄສ ໃນເອກະສານຊຸດເຝິກອົບຮົມຄູ ແລະ ຜູ້ທີ່ກ່ຽວຂ້ອງກັບການອົບຮົມລ້ຽງດູເດັກປະຖົມໄວ ໜ່ວຍທີ 11-15 ສາຂາວິຊາ ສຶກສາສາດ.* ນົນທະບູຣີ: ມະຫາວິທະຍາໄລສຸໂຂໄທທຳມາທິຣາດ

ເພັດຕາວັນ ວັນນະຣະສຸກ. (2562). ສຶກສາຄວາມມີວິໄນໃນຕົນເອງຂອງນັກສຶກສາລະດັບປະລິນຍາຕີ ມະຫາວິທະຍາ ໄລແຫ່ງຊາດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. *ວາລະສານສາລະສົນເທດ* ປີທີ *10* (2).

ຢານີນາດ ສາຍແວວ. (2552). *ພຶດຕິກຳຄວາມຮັບຜິດຊອບຕໍ່ໜ້າຂອງນັກສຶກສາມະຫາວິທະຍາສິລະປະກອນ ພະລາຊະວັງສະໜາມຈັນ* ຄະນະສຶກສາສາດ ມະຫາວິທະຍາໄລສິລະປະກອນ ວິທະຍາເຂດລາຊະວັງສະໜາມຈັນ.

ອຳນາດ ຈັນທະຣະມະຫາ. (2542). *ການສຶກສາຈະລິຍະທຳດ້ານຄວາມມີວິໄນໃນຕົນເອງຂອງນັກຮຽນນັກສຶກສາໃນແຂວງຮ້ອຍເອັດ* [ປະລິນຍາຕີ] ມະຫາວິທະຍາໄລມະຫາສາຣະຄາມ, ມາຫາສາຣະຄາມ.

Carpenter, J., & Pease, J. (2013). Preparing Students to Take Responsibility for Learning: The Role of NonCurricular Learning Strategies. *Journal of Curriculum and Instruction*, 7, 38-55. doi:10.3776/joci.2013

Fritz, J. (2017). Using Analytics to Nudge Student Responsibility for Learning. *New Directions for Higher Education,* 2017(179), 65-75. doi:https://doi.org/10.1002/he.20244

Wiggins, J. S. (1971). *The Psychology of Personality*.New York : Addison-Wesley.